## ມິຊຊາອາທິດທີ 25 ກຳນົດທຳມະດາປີ C

## ວັນທີ 22 ກັນຍາ 2019



**ພຣະວໍລະສານໂດຍນັກບຸນລູກາ 16, 1-13**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວຄວາມປຽບທຽບໃຫ້ພວກລູກສິດຟັງວ່າ: ເສດຖີຜູ້ໜຶ່ງມີຜູ້ຈັດການ ແລະ ຜູ້ຈັດການນີ້ຖືກຟ້ອງຫາວ່າໄດ້ຜານຊັບຂອງເພິ່ນ. ເສດຖີຜູ້ນັ້ນເລີຍຮຽກຜູ້ຈັດການນີ້ມາເວົ້າວ່າ: ເຮົາຄືໄດ້ຍິນເຂົາເວົ້າຫຍັງໃຫ້ເຈົ້າ, ແມ່ນບໍ? ເຈົ້າຈົ່ງລາຍງານມາໃຫ້ເຮົາຟັງ ຍ້ອນວ່າເຈົ້າຈະບໍ່ໄດ້ເປັນຜູ້ຈັດການຂອງເຮົາອີກຕໍ່ໄປ.

ຜູ້ຈັດການເລີຍຄິດໃນໃຈວ່າ: ຈະເຮັດແນວໃດດີ, ຍ້ອນວ່ານາຍຈະປົດອອກຈາກໜ້າທີ່ແລ້ວ? ຈະໄປຂຸດດິນບໍ? ບໍ່ມີແຮງພໍ. ໄປຂໍທານບໍ? ກໍອາຍເຂົາ. ໂອ! ຄິດອອກແລ້ວ, ຮູ້ຈັກວິທີເຮັດໃຫ້ຄົນອື່ນຮັບໂຕໄວ້ຢູ່ນຳເມື່ອເວລາຈະຖືກປົດຈາກຕຳແໜ່ງເປັນຜູ້ຈັດການ. ດັ່ງນີ້ເຂົາເລີຍຮຽກພວກຕິດໜີ້ນາຍມາເທື່ອລະຄົນ.

ເຂົາເວົ້າກັບຜູ້ທີໜຶ່ງວ່າ: ເຈົ້າຕິດໜີ້ນາຍເຮົາເທົ່າໃດ? ຜູ້ນັ້ນຕອບ: ຕິດໜີ້ນ້ຳມັນຮ້ອຍກະຖັງ. ຜູ້ຈັດການບອກວ່າ: ເອົາບັນຊີຂອງເຈົ້າອອກມາ, ນັ່ງລົງແລະຂຽນໃສ່ວ່າ: ຫ້າສິບກະຖັງເສຍໄວໆ. ຕໍ່ມາຜູ້ຈັດການກໍຖາມຄົນທີສອງ: ເຈົ້າຕິດໜີ້ນາຍເຮົາເທົ່າໃດ? ລາວຕອບວ່າ: ຕິດໜີ້ເຂົ້າຮ້ອຍໝື່ນ. ຈົ່ງເອົາບັນຊີອອກມາແລ້ວຂຽນວ່າ: ແປດສິບເສຍ.

ເສດຖີຜູ້ເຈົ້າຂອງກໍຍ້ອງຜູ້ຈັດການໃຈຄິດວ່າ: ເປັນຄົນສະຫລຽວສະຫລາດ. ຍ້ອນວ່າບຸດຂອງໂລກຫລັກແຫລມໃນວຽກການຂອງຕົນກວ່າບຸດແຫ່ງຄວາມສະວ່າງ. ດັ່ງນີ້, ເຮົາບອກພວກເຈົ້າວ່າ: ຈົ່ງເອົາຊັບສົມບັດອັນເຄີຍພາໄປທາງບາບນັ້ນມາໃຊ້ຊອກຫາມິດສະຫາຍ, ຜູ້ຈະຕ້ອນຮັບພວກເຈົ້າເຂົ້າໃນພຳນັກນິລັນດອນເມື່ອເວລາພວກເຈົ້າຈະໝົດເນື້ອປະດາຕົວ.

ຜູ້ທີ່ຊື່ສັດໃນເລື່ອງເລັກນ້ອຍ ກໍຈະຊື່ສັດໃນເລື່ອງໃຫຍ່ດ້ວຍ. ແລະຜູ້ທີ່ບໍ່ສັດຊື່ໃນເລື່ອງເລັກນ້ອຍ ກໍຈະບໍ່ຊື່ສັດໃນເລື່ອງໃຫຍ່ເຊັ່ນດຽວກັນ. ດັ່ງນັ້ນຖ້າທ່ານບໍ່ຊື່ສັດໃນການໃຊ້ຈ່າຍເງິນທອງຂອງໂລກນີ້ແລ້ວ, ແມ່ນໃຜຈະວາງໃຈມອບຊັບອັນແທ້ຈິງໃຫ້ແກ່ທ່ານ? ແລະຖ້າທ່ານບໍ່ສຸດຈະລິດຕໍ່ຊັບຂອງຜູ້ອື່ນແລ້ວ, ໃຜຈະກ້າມອບຊັບທີ່ເປັນຂອງທ່ານເອງໃຫ້ແກ່ທ່ານໄດ້? ບໍ່ມີຄົນໃຊ້ຄົນໃດຮັບໃຊ້ນາຍສອງຄົນໄດ້. ຍ້ອນເຂົາຈະຊັງນາຍໜຶ່ງແລະຮັກອີກນາຍໜຶ່ງ.

ທ່ານບໍ່ສາມາດຮັບໃຊ້ພຣະເຈົ້າແລະເງິນພ້ອມກັນໄດ້.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 16, 1-13**

ອາທິດທີ່ຜ່ານມາ, ພວກເຮົາໄດ້ຟັງວາຈາພຣະເຈົ້າທີ່ກ່າວເຖິງຄວາມປຽບທຽບລູກລ້າງຜານຜູ້ໜຶ່ງທີ່ໄດ້ໃຊ້ຈ່າຍຜານຊັບສິນເງິນຄຳຂອງຕົນຈົນໝົດກ້ຽງຢູ່ເມືອງໄກ ແຕ່ໃນທີ່ສຸດເຂົາກໍສຳນຶກແລະກັບຄືນມາຫາພໍ່ຜູ້ທີ່ພ້ອມຈະໃຫ້ອະໄພເຂົາສະເໝີ.

ວັນອາທິດນີ້ວາຈາພຣະເຈົ້າກໍສືບຕໍ່ເລົ່າຄວາມປຽບທຽບໃຫ້ພວກເຮົາຟັງກ່ຽວກັບຜູ້ຈັດການຜູ້ໜຶ່ງທີ່ໄດ້ຜານຊັບສົມບັດນາຍຂອງຕົນຜູ້ເປັນເສດຖີ ແລະເຂົາຈະຖືກໄລ່ອອກຈາກໜ້າທີ່ຜູ້ຈັດການໃນໄວໆນີ້. ແຕ່ພຣະວໍລະສານບໍ່ໄດ້ບອກລາຍລະອຽດໃຫ້ພວກເຮົາຮູ້ວ່າຜູ້ຈັດການນີ້ໄດ້ຜານຊັບສົມບັດນາຍຂອງເຂົາຢ່າງໃດ? ພວກເຮົາຮູ້ແຕ່ວ່າຜູ້ຈັດການນີ້ໄດ້ໃຊ້ຈ່າຍເງິນຄຳຂອງນາຍຢ່າງບໍ່ຖືກຕ້ອງ. ແລະນາຍຈະໄລ່ເຂົາອອກຈາກໜ້າທີ່. ແທນທີ່ຜູ້ຈັດການນີ້ຈະໄປພົບນາຍເພື່ອອະທິບາຍເຖິງສິ່ງນາຍໄດ້ຍິນບໍ່ດີກ່ຽວກັບເຂົາແລະສິ່ງທີ່ເຂົາໄດ້ກະທຳ, ເຂົາພັດຄິດຫາຜູ້ທີ່ຈະຊ່ວຍເຂົາໃນເວລາທີ່ເຂົາບໍ່ຢູ່ກັບນາຍອີກ. ເຂົາໄດ້ເອີ້ນຜູ້ທີ່ເປັນໜີ້ສິນນາຍຂອງເຂົາເຂົ້າມາ ແລະລົດຜ່ອນບັນຊີໜີ້ສິນຂອງຜູ້ນັ້ນລົງ.

ເມື່ອນາຍຂອງຜູ້ຈັດການນີ້ຮູ້ຂ່າວແທນທີ່ເຂົາຈະມີຄວາມໂກດຮ້າຍໂມໂຫຕໍ່ການກະທຳດັ່ງກ່າວ, ນາຍພັດຍ້ອງຜູ້ຈັດການນີ້ວ່າເປັນຄົນສະຫລຽວສະຫລາດ. ຍ້ອນວ່າ *« ບຸດຂອງໂລກຫລັກແຫລມໃນວຽກການຂອງຕົນກວ່າບຸດແຫ່ງຄວາມສະຫວ່າງ »*. ຄຳເວົ້ານີ້ມີຄວາມໝາຍແນວໃດ? ໝາຍຄວາມວ່າຄົນບໍ່ສັດຊື່ສະຫຼຽວສະຫລາດກວ່າຄົນສັດຊື່ບໍ? ຫລືຄົນສັດຊື່ແຕ່ບໍ່ຮູ້ຈັກນຳໃຊ້ຊັບສິນທີ່ເຂົາມີເພື່ອເຂົ້າໃນອານາຈັກສະຫວັນ ກໍບໍ່ທໍ່ກັບຜູ້ທີ່ບໍ່ສັດຊື່ແຕ່ຮູ້ຈັກຊອກຫາວິທີເພື່ອເຂົ້າໃນອານາຈັກສະຫວັນໄດ້. ດັ່ງຜູ້ຈັດການຂອງເສດຖີໃນຄວາມປຽບທຽບວັນນີ້ ເຂົາໄດ້ໃຊ້ເງິນຄຳຂອງໂລກນີ້ເພື່ອຊອກຫາມິດສະຫາຍຜູ້ທີ່ຈະຊ່ວຍເຂົາໃຫ້ຮອດໃນໂລກໜ້າ. ດັ່ງດຽວກັນກັບໂຈນຜູ້ຮ້າຍທີ່ກັບໃຈເທິງໄມ້ກາງເຂນ ເມື່ອເຂົາສຳນຶກໄດ້ເຖິງສິ່ງທີ່ເຂົາກະທຳບໍ່ດີບົນໂລກນີ້ ເຂົາກໍຊອກຫາຜູ້ທີ່ຈະຊ່ວຍເຂົາໃຫ້ຮອດໃນໂລກໜ້າ ດ້ວຍການວອນຂໍພຣະເຢຊູເຈົ້າໃຫ້ເຂົາໄດ້ເຂົ້າໃນອານາຈັກຂອງພຣະອົງ.

ສິ່ງທີ່ກ່າວມາຂ້າງເທິງນີ້ອາດຈະຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມໝາຍຂອງຄຳເວົ້າຂອງພຣະເຢຊູເຈົ້າໃນວັນນີ້ວ່າ: *« ບຸດຂອງໂລກນີ້ຫລັກແຫລມໃນວຽກການຂອງຕົນກວ່າບຸດແຫ່ງຄວາມສະຫວ່າງ »*.

ສ່ວນພວກເຮົາຜູ້ພຣະເຈົ້າໄດ້ມອບໜ້າທີ່ໃຫ້ເປັນຜູ້ຈັດການໃນພາລະກິດທີ່ພຣະອົງໄດ້ມອບໝາຍໃຫ້ແຕ່ລະຄົນເມື່ອເວລາພວກເຮົາຮັບສິນລ້າງບາບ ອັນແມ່ນພາລະກິດແຫ່ງການເປັນລູກສິດພຣະເຢຊູເຈົ້າ, ເປັນຜູ້ປະກາດພຣະວາຈາຂອງພຣະອົງ; ພວກເຮົາໄດ້ທຳໃຫ້ມັນເກີດດອກອອກຜົນແລ້ວບໍ? ພວກເຮົາໄດ້ມີຄວາມສະຫລຽວສະຫລາດໃນການດຳລົງຊີວິດກຣິສຕັງ, ໃນການນຳໃຊ້ສິ່ງຂອງໆໂລກນີ້ເພື່ອຊ່ວຍພວກເຮົາໃຫ້ຮອດໃນໂລກໜ້າບໍ?

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ຮູ້ຈັກນຳໃຊ້ພຣະຄຸນທີ່ພຣະເຈົ້າມອບໃຫ້ພວກເຮົາໃນແຕ່ລະວັນນັ້ນໃຫ້ເປັນປະໂຫຍດສຳລັບພວກເຮົາແລະຄົນອື່ນໃນໂລກນີ້ແລະໃນໂລກໜ້າດ້ວຍ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ